ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 09 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 27 ມີນາ 2017


ສຳນັກງານ ຄຄຊ

ເລກທີ 03-13

ວັນທີ 27 MAR 2017

ໂທລະສັບ 021 217770


## ລາຍງານການເຄື່ອນໄຫວປະຈຳອາທິດ ທີ 06-10/03/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

- ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,88% ທຽບເງິນເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາອອກມາບໍ່ດີເປັນຕົ້ນແມ່ນ: ຕົວເລກການສັ່ງຊື້ສິນຄ້າອຸດສາຫະກຳເພີ່ມຂຶ້ນ 1,2% ໃນເດືອນ 1/2017 ຊຶ່ງເປັນການເພີ່ມຂຶ້ນຕໍ່າກວ່າເດືອນຜ່ານມາ ແລະ ຕົວເລກດຸນການຄ້າໃນເດືອນ 1/2017 ຂາດດຸນເພີ່ມຂຶ້ນເປັນ 48,5 ຕື້ໂດລາ ຈາກ 44,3 ຕື້ໂດລາ ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 27/2/-03/03/2017 | ອາທິດນີ້ 06-10/03/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,0520 | 1,0613 | -0,88% |
| ໂດລາ/ເຢນ | 114,26 | 115,35 | -0,94% |
| ໂດລາ/ບາດ | 35,06 | 35,40 | -0,96% |
| ໂດລາ/ເປໂຊ | 50,36 | 50,26 | 0,22% |
| ໂດລາ/ຣູເປັຍ | 13.380,0 | 13.378,0 | 0,01% |
| ໂດລາ/ໂດລາສິງກະໂປ | 1,4141 | 1,4173 | -0,23% |
| ໂດລາ/ຢວນ | 6,8992 | 6,9162 | -0,25% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 5,35% ຈາກ 54,06 ໂດລາ/ບາເຣວ ມາເປັນ 51,17 ໂດລາ/ບາເຣວ ເນື່ອງຈາກສຳນັກງານພະລັງງານສາກົນ (EIA) ໄດ້ຄາດຄະເນວ່າການຜະລິດນ້ຳມັນຂອງສະຫະລັດອາເມລິກາ ອາດຈະເພີ່ມຂຶ້ນເປັນ 0,23 ລ້ານບາເຣວ/ວັນ. ສຳລັບລາຄາຄຳຫຼຸດລົງ 2,46% ຈາກ 1.226,76 ໂດລາ/ອອນ ມາເປັນ 1.196,53 ໂດລາ/ອອນ ເນື່ອງຈາກ

ກອງທຶນທີ່ຖືຄຳທີ່ໃຫຍ່ທີ່ສຸດຂອງໂລກໄດ້ຫຼຸດຜ່ອນການຖືຄອງຄຳລົງ 3,81 ໂຕນ ຈາກ 840,58 ໂຕນ ມາເປັນ 836,77 ໂຕນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,06% ແລະ ແຂງຄ່າຂຶ້ນ 0,96% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າ 1,87% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າ 2,89% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 27/2/- 3/03/2017 | | | ອາທິດນີ້ 06-10/03/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.317,14 | 8.345,61 | 8.327,61 | 8.318,43 | 8.354,98 | 8.332,65 | -0,02% | -0,11% | -0,06% | -2,00% | -1,76% | -1,87% |
| ບາດ | 236,65 | 238,20 | 237,66 | 234,63 | 235,86 | 235,40 | 0,86% | 0,99% | 0,96% | -2,97% | -2,92% | -2,89% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,88% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,39%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,89% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 17,74%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (03-09/03/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 46,32 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 57,35 ລ້ານໂດລາ ແລະ ຂາຍໂດລາໄດ້ 11,03 ລ້ານໂດລາ) ແຕ່ ຂາຍເງິນບາດສຸດທິ 1.773,44 ລ້ານບາດ (ໃນນີ້ ຊື້ບາດໄດ້ 129,40 ລ້ານບາດ ແລະ ຂາຍບາດໄດ້ 1.902,84 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ຫຼຸດລົງ 8,60% ແຕ່ ເງິນບາດເພີ່ມຂຶ້ນ 18,34%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 1,25 ລ້ານໂດລາ ແຕ່ສ່ວນເງິນບາດແມ່ນບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,81 ລ້ານໂດລາສະຫະລັດ ແລະ ເງິນບາດຈຳນວນ 64,04 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ບໍ່ມີການເຄື່ອນໄຫວ.

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 24/2/-02/3/2017 | | ອາທິດທີ 03-09/3/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **55,14** | **227,47** | **57,35** | **129,40** | **4,01%** | **-43,11%** |
| - ທ/ຄທຸລະກິດລັດ | 11,05 | 118,26 | 7,93 | 55,90 | -28,24% | -52,73% |
| - ທ/ຄທຸລະກິດອື່ນໆ | 44,09 | 109,21 | 49,42 | 73,50 | 12,09% | -32,70% |
| **2. ການຂາຍເງິນຕາຕ່າງປະເທດ** | **19,67** | **1.489,84** | **11,03** | **1.902,84** | **-43,92%** | **27,72%** |
| - ທ/ຄທຸລະກິດລັດ | 6,11 | 126,01 | 5,77 | 76,11 | -5,56% | -39,60% |
| - ທ/ຄທຸລະກິດອື່ນໆ | 13,56 | 1.363,83 | 5,26 | 1.826,73 | -61,21% | 33,94% |
| **ຊື້-ຂາຍສຸດທິ ທທກ** | **35,47** | **-1.262,37** | **46,32** | **-1.773,44** | **30,59%** | **40,48%** |
| - ຜິດດ່ຽງ ຊື້-ຂາຍ | 64,33% | -554,96% | 80,77% | -1.370,5% | 25,56% | 146,96% |
| - ມູນຄ່າການຊື້-ຂາຍ | **74,81** | **1.717,31** | **68,38** | **2.032,24** | **-8,60%** | **18,34%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-5,50** | **0,00** | **-1,25** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 5,50 | 0,00 | 1,25 | 0,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **7,87** | **68,92** | **3,81** | **64,04** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0** | **0** | **0** | **0** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0 | 0 | 0 | 0 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0 | 0 | 0 | 0 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 02/2017 ຢູ່ໃນລະດັບ 2,19% ຫຼຸດລົງຈາກ 2,27% ໃນເດືອນ 01/2016.

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 70,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 41,18 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 572 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 338 ສະບັບ ເທົ່າກັບ 37,14% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 204,17 ຕື້ກີບ ຫຼຸດລົງ 166,34 ຕື້ກີບ ເທົ່າກັບ 44,89% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-09/3/2017) ມີທັງໝົດ 2.318 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.313 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າຫຼຸດລົງ ຈາກ 297,07 ຕື້ກີບ ມາເປັນ 298,68 ຕື້ກີບ ເທົ່າກັບ 50,13%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 5 ຄັ້ງ, ມູນຄ່າການໂອນ 0,39 ຕື້ກີບ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.112,53 ຈຸດ ເພີ່ມຂຶ້ນ 32,72% ເມື່ອທຽບໃສ່ອາທິດຜ່ານມາ, ມີປະລິມານຊື້-ຂາຍຮຸ້ນທັງໝົດ 55.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 230,49 ລ້ານກີບ ຫຼຸດລົງ 42,23% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 58,73% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 27/2/-03/03/2017 | ດັດຊະນີອາທິດທີ 06-10/3/2017 | (ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.089,48 | 1.112,53 | 32,72% | |

ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 11.900 | 67.025.000 | 5.632 | 60.900 | 338.005.000 | 5.550 | 411,76 | 404,30 | -82 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 37.200 | 193.650.000 | 5.206 | 73.800 | 392.460.000 | 5.318 | 98,39 | 102,66 | 112 |
| ບໍລິສັດລາວເວີນ ມະຫາຊົນ | 4.800 | 33.110.000 | 6.898 | 3.500 | 30.250.000 | 8.643 | - 27,08 | - 8,64 | 1.745 |
| ບໍລິສັດປີໂຕລ້ຽມ ເທຣດ ດິ້ງລາວ ມະຫາຊົນ | 50.100 | 105.230.000 | 2.100 | 0 | 0 | 2.300 | - 100 | - 100 | 200 |
| ບໍລິສັດສຸວັນນີ ໂຮມເຊັນເຕີ ມະຫາຊົນ | 0 | 0 | 0 | 57.700 | 177.820.000 | 3.082 | - | - | - |
| ທັງໝົດ | **104.000** | **399.015.000** | 3.837 | **195.900** | **938.535.000** | 4.791 | 88,37 | 135,21 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- **ສຳເລັດການຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງຂອງ ຄຄຊ (ທຫລ); ❷ ກອງປະຊຸມເປີດກວ້າງຄະນະບໍລິຫານງານພັກ ທຫລ ຄັ້ງທີ 5 ສະໄໝທີ III (ທຫລ); ❸ ກອງປະຊຸມເປີດກວ້າງຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ກ່ຽວກັບຮ່າງດຳລັດວ່າການປົກປ້ອງຜູ້ຊົມໃຊ້ທາງການເງິນ; ❹ ກອງປະຊຸມປຶກສາຫາລືການປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍການບັນຊີ ແລະການກວດສອບວຽກງານຫຼັກຊັບ, ຂໍ້ຕົກລົງວ່າດ້ວຍການໄດ້ມາ ແລະ ຈຳໜ່າຍຊັບສິນຂອງບໍລິສັດຈົດທະບຽນ ແລະຂໍ້ຕົກລົງວ່າດ້ວຍລະບົບເຕັກໂນໂລຊີຂໍ້ມູຂ່າວສານຂອງບໍລິສັດຫຼັກຊັບຂອງ ຄຄຊ ຢູ່ທີ່ (ທຫລ); ❺ ກອງປະຊຸມສຳມະນາເຜີຍແຜ່ນິຕິກຳທີ່ໃຊ້ໃນການຄຸ້ມຄອງທະນາຄານທຸລະກິດ ໃນຫົວຂໍ້: ຂໍ້ຕົກລົງວ່າດ້ວຍຂອບເຂດທາງການໃຫ້ສິນເຊື່ອຂອງທະນາຄານທຸລະກິດ ເລກທີ 330/ທຫລ ໃຫ້ແກ່ພະນັກງານ ກຄທ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມປຶກສາຫາລືກ່ຽວກັບການເຄື່ອນໄຫວວຽກງານຂອງຄະນະສະພາບໍລິຫານ ແລະ ຜູ້ຖືຮຸ້ນ ທີ່ຕາງໜ້າໃຫ້ລັດຖະບານຢູ່ໃນບັນດາລັດວິສາຫະກິດທີ່ລັດເປັນຜູ້ລົງທຶນ ທີ່ ກະຊວງການເງິນ; ❷ ກອງປະຊຸມເປີດກວ້າງຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ກ່ຽວກັບ ຮ່າງດຳລັດວ່າການປົກປ້ອງຜູ້ຊົມໃຊ້ທາງການເງິນ; ❸ ກອງປະຊຸມປຶກສາຫາລືກ່ຽວກັບລະບົບການຮັບປະກັນວຽກງານກວດສອບໃນວັນທີ 7 ມີນາ 2017 ທີ່ກະຊວງການເງິນ; ❹ ກອງປະຊຸມສະຫຼຸບວຽກງານປະຈຳປີ 2016 ຂອງສະຖາບັນການຈຸລະພາກທີ່ບໍ່ຮັບຝາກເງິນ (ສກຈບ) ທີ່ເມືອງທົ່ງສາ, ເມືອງເງິນ, ເມືອງຄອບ ແລະ ເມືອງຊຽງຮ່ອນ ໃນລະຫວ່າງວັນທີ 25 ກຸມພາ - 04 ມີນາ 2017; ❺ ກອງປະຊຸມຜ່ານດຳລັດວ່າດ້ວຍການປົກປ້ອງເງິນຝາກ ທີ່ກອງປະຊຸມລັດຖະບານ.

## III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າເນື້ອໃນຂອງຫຼັກການບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ.
- ສືບຕໍ່ລົງຕິດຕາມການປະຕິບັດມາດຕະການຊົ່ວຄາວ ທີ່ ທະນາຄານ ພັດທະນາລາວ ແລະ ທະນາຄານ ສົ່ງເສີມກະສິກຳ;
- ສືບຕໍ່ຄົ້ນຄວ້າບັນເອກະສານທີ່ຕິດພັນ ໃນການກະກຽມການປະເມີນຄວາມສ່ຽງລະດັບຊາດ ໃນການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຮ່ວມລະຫວ່າງ ທຫລ ກັບ ຫ້ອງວ່າການສູນກາງພັກ ຢູ່ທີ່ (ທຫລ); ❷ ກອງປະຊຸມສຳມະນາທາງດ້ານວິຊາການກ່ຽວກັບການຈັດຕັ້ງປະຕິບັດການພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ຢູ່ທີ່ (ທຫລ); ❸ ກອງປະຊຸມສາມະນາກ່ຽວກັບການສ້າງຄວາມເຂັ້ມແຂງ ແລະ ຄວາມອາດສາມາດໃນການປ້ອງກັນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ❹ ກອງປະຊຸມຮ່ວມກັນລະຫວ່າງ ກົມບັນຊີ-ການເງິນ, ຫ້ອງການ ທຫລ ແລະ ກົມຈັດຕັ້ງແລະ ພະນັກງານ ກ່ຽວກັບການແບ່ງໜ້າທີຮັບຜິດຊອບລະຫວ່າງ ຫ້ອງການ ທຫລ ກັບ ກົມບັນຊີ-ການເງິນໃນການຈັດຕັ້ງປະຕິບັດວຽກງານການເງິນຂອງ ທຫລ.
- **ກະກຽມເຂົ້າຮ່ວມກອງປະຊຸມ ແລະ ສຳມະນາຕ່າງໆ:** ❶ ກອງປະຊຸມຄະນະລັດຖະບານ ປະຈຳເດືອນ ມີນາ 2017 ທີ່(ຫສນຍ); ❷ ກອງປະຊຸມສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການກະກຽມແຜນດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ່ 2 ສະພາປະຊາຊົນຂັ້ນແຂວງ ຊຸດທີ່ I ທີ່(ສະພາແຫ່ງຊາດ); ❸ ກອງປະຊຸມສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ເມືອງ ຫີນເຫີບ ປະຈຳປີ 2016 ໃນວັນທີ 15 ມີນາ 2017.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ